ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

**ສຳນັກງານນາຍົກລັດຖະມົນຕີ** — ເລກທີ 374 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 22 ຕຸລາ 2007

# ດຳລັດ

## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກະຊວງແຜນການ ແລະ ການລົງທຶນ

- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານ ແຫ່ງ ສ.ປ.ປ. ລາວ ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003;
- ອີງຕາມ ມະຕິຕົກລົງ ຂອງ ຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການປັບປຸງກະຊວງ ແລະ ອົງການທຽບເທົ່າກະຊວງ ສະບັບເລກທີ 72/ສພຊ, ລົງວັນທີ 12 ຕຸລາ 2007;
- ອີງຕາມ ໃບສະເໜີ ຂອງ ທ່ານປະທານຄະນະກຳມະການແຜນການ ແລະ ການລົງທຶນ ສະບັບເລກທີ 69/ຄຜທ, ລົງວັນທີ 24 ມັງກອນ 2007 ແລະ ໃບສະເໜີ ຂອງ ທ່ານລັດຖະມົນຕີ ປະຈຳ ສຳນັກງານນາຍົກລັດຖະມົນຕີ, ຫົວໜ້າທະບວງການປົກຄອງ ແລະ ຄຸ້ມຄອງລັດຖະກອນ ສະບັບເລກທີ 100/ທປຄ.ກພລ, ລົງວັນທີ 17 ຕຸລາ 2007.

**ນາຍົກລັດຖະມົນຕີ ແຫ່ງ ສ.ປ.ປ. ລາວ ອອກດຳລັດ:**

### ໝວດທີ I
### ທີ່ຕັ້ງ ແລະ ພາລະບົດບາດ

**ມາດຕາ 1. ທີ່ຕັ້ງ ແລະ ພາລະບົດບາດ**

**ກະຊວງແຜນການ ແລະ ການລົງທຶນ** ຂຽນຫຍໍ້ "ຜ.ທ" ຂຽນເປັນພາສາຝຣັ່ງ: **Ministère du Plan et des Investissements** (*ຂຽນຫຍໍ້: MPI* ) ແມ່ນກົງຈັກ ຂອງ ລັດຖະບານ, ມີພາ

ລະບົດບາດເປັນເສນາທິການໃຫ້ແກ່ລັດຖະບານ ແລະ ຄຸ້ມຄອງມະຫາພາກ ດ້ານວຽກງານແຜນການ ແລະ ການລົງທຶນ. ຄົ້ນຄວ້າສັງລວມກ່ຽວກັບຍຸດທະສາດ, ແຜນແມ່ບົດ, ແຜນ ພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ກົນໄກ ແລະ ນະໂຍບາຍລວມ ກ່ຽວກັບການຄຸ້ມຄອງເສດຖະກິດ, ວຽກງານສະຖິຕິ, ການລົງທຶນພາຍໃນ, ຕ່າງປະເທດ ແລະ ການຮ່ວມມືເສດຖະກິດກັບຕ່າງປະເທດ ໃນຂອບເຂດທົ່ວປະເທດ.

## ໝວດທີ II
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 2. ໜ້າທີ່**

ກະຊວງແຜນການ ແລະ ການລົງທຶນມີໜ້າທີ່ດັ່ງນີ້:

**2.1** ຄົ້ນຄ້ວາຫັນເອົາແນວທາງນະໂຍບາຍຂອງພັກ ແລະ ລັດຖະບານ ໃຫ້ກາຍເປັນແຜນຍຸດທະສາດພັດທະນາເສດຖະກິດ-ສັງຄົມ, ແຜນການໄລຍະຍາວ, ແຜນການ 5 ປີ ແລະ ແຜນການປະຈຳປີເພື່ອສະເໜີລັດຖະບານພິຈາລະນາ;

**2.2** ຄົ້ນຄ້ວານະໂຍບາຍ ແລະ ລະບຽບກົດໝາຍ ກ່ຽວກັບວຽກງານແຜນການ, ການລົງທຶນ, ສະຖິຕິ ແລະ ການຮ່ວມມືສາກົນ;

**2.3** ຄົ້ນຄວ້າ, ສັງລວມ, ຕິດຕາມ, ປະສານສົມທົບ, ຊຸກຍູ້ ແລະ ຈັດຕັ້ງປະຕິບັດນະໂຍບາຍ ວ່າດ້ວຍການສົ່ງເສີມການລົງທຶນ ຢູ່ ສ.ປ.ປ. ລາວ, ພິຈາລະນາອະນຸມັດ ຫຼື ຖອນອະນຸມັດການລົງທຶນພາຍໃນ ແລະ ຕ່າງປະເທດ;

**2.4** ເປັນໃຈກາງຄົ້ນຄ້ວາ ແລະ ປະສານງານ ໃນການຮ່ວມມືຮອບດ້ານ ແລະ ຕິດຕາມ ຊຸກຍູ້ ການລົງທຶນ ລະຫ່ວາງ ລາວ-ຫວຽດນາມ ແລະ ລາວ-ຈີນ ໃນຂອບເຂດສິດຂອງຕົນ ຕາມການຕົກລົງຂອງລັດຖະບານ ໃນແຕ່ລະໄລຍະ;

**2.5** ເປັນໃຈກາງຄົ້ນຄວ້າ ແລະ ປະສານງານ ໃນການຮ່ວມມື ເພື່ອການພັດທະນາ ກັບບັນດາປະເທດ, ອົງການຈັດຕັ້ງສາກົນ ແລະ ສະຖາບັນການເງິນ ສາກົນ;

**2.6** ເປັນໃຈກາງໃນການຊີ້ນຳ, ນຳພາ, ຄຸ້ມຄອງ, ປະສານງານ ແລະ ຈັດຕັ້ງປະຕິບັດວຽກງານສະຖິຕິ ໂດຍການສ້າງລະບົບຖານຂໍ້ມູນ ແລະ ດຳເນີນການສຳຫຼວດເກັບກຳ, ສັງລວມ, ວິໄຈ, ຮັບຮອງ, ນຳສະເໜີ ແລະ ເຜີຍແຜ່ຂໍ້ມູນສະຖິຕິທາງການ, ນັບທັງການບໍລິການວິຊາການສະຖິຕິ ເພື່ອຮັບໃຊ້ສັງຄົມ;

**2.7** ເກັບກຳ ຄົ້ນຄວ້າ ແລະ ວິໄຈຂໍ້ມູນສະພາບເສດຖະກິດ-ສັງຄົມ, ສັງລວມລາຍງານການນຳ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອເປັນບ່ອນອີງໃນການຜັນຂະຫຍາຍ, ຈັດຕັ້ງປະຕິບັດແຜນພັດທະນາຂອງຂະແໜງການ ແລະ ທ້ອງຖິ່ນຕ່າງໆ;

**2.8** ປະສານສົມທົບກັບກະຊວງການເງິນ ໃນການຈັດສັນງົບປະມານການລົງທຶນຂອງລັດ ໃຫ້ບັນດາຂະແໜງການ ແລະ ທ້ອງຖິ່ນ ລວມທັງທຶນສົມທົບຂອງລັດ ກັບ ໂຄງການຮ່ວມມືກັບຕ່າງປະເທດ ເພື່ອສະເໜີລັດຖະບານພິຈາລະນາ;

2.9 ເປັນໃຈກາງໃນການສະຫຼຸບສັງລວມ ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ການລົງທຶນ ໃນແຕ່ລະໄລຍະ ເພື່ອສະເໜີໃຫ້ລັດຖະບານພິຈາລະນາ ແລະ ຮັບຮອງ;

2.10 ປະເມີນໂຄງການລົງທຶນ ກ່ອນເອົາເຂົ້າແຜນ ແລະ ຕິດຕາມ-ປະເມີນຜົນ ພາຍຫຼັງໂຄງການຖືກຮັບຮອງ;

2.11 ປະຕິບັດໜ້າທີ່ເປັນຜູ້ປະຈຳການ ຂອງ ຄະນະກຳມາທິການຮ່ວມມືລາວ-ຫວຽດນາມ ແລະ ຄະນະກຳມາທິການຮ່ວມມື ລາວ-ຈີນ;

2.12 ຈັດຕັ້ງຝຶກອົບຮົມດ້ານວິຊາການ ກ່ຽວກັບວຽກງານເສດຖະກິດແຜນການ, ການປະເມີນຜົນ, ສະຖິຕິ ແລະ ການລົງທຶນ ເພື່ອຍົກລະດັບຄວາມຮູ້ ຄວາມສາມາດ ໃນການປະຕິບັດໜ້າທີ່ວຽກງານ ໃຫ້ພະນັກງານວິຊາການຂອງຂະແໜງແຜນການ ແລະ ການລົງທຶນ ໃນຂອບເຂດທົ່ວປະເທດ;

2.13 ຊີ້ນຳດ້ານວິຊາການກ່ຽວກັບວຽກງານແຜນການ, ການປະເມີນຜົນໂຄງການລົງທຶນ, ສະຖິຕິ ແລະ ການລົງທຶນ ໃຫ້ແກ່ຂະແໜງການ ແລະ ທ້ອງຖິ່ນຕ່າງໆ ເພື່ອຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດ;

2.14 ສຶກສາອົບຮົມການເມືອງແນວຄິດ, ປັບປຸງບູລະນະກົງຈັກການຈັດຕັ້ງ ແລະ ຄຸ້ມຄອງ, ກໍ່ສ້າງ, ບຳລຸງຍົກລະດັບວິຊາສະເພາະ ແລະ ທິດສະດີການເມືອງ ໃຫ້ພະນັກງານ-ລັດຖະກອນ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ;

2.15 ຂຶ້ນແຜນງົບປະມານຮັບໃຊ້ການເຄື່ອນໄຫວວຽກງານ ສຳລັບຂະແໜງການຂອງຕົນ ແລະ ຈັດຕັ້ງຄຸ້ມຄອງ ນຳໃຊ້ງົບປະມານ, ຊັບສິນບັດຂອງລັດ ທີ່ຂຶ້ນກັບການຄຸ້ມຄອງຂອງຕົນ ຕາມລະບຽບການ.

**ມາດຕາ 3. ຂອບເຂດສິດ**

ກະຊວງແຜນການ ແລະ ການລົງທຶນ ມີຂອບເຂດສິດດັ່ງນີ້:

3.1 ອອກຂໍ້ຕົກລົງ ຄຳສັ່ງ, ບົດແນະນຳ ແລະ ແຈ້ງການ ເພື່ອເຜີຍແຜ່ແຜນນະໂຍບາຍ, ລະບຽບກົດໝາຍ ແລະ ມາດຕະການຕ່າງໆ ທີ່ກ່ຽວຂ້ອງກັບພາລະບົດບາດ ຂອງ ຂະແໜງແຜນການ ແລະ ການລົງທຶນ;

3.2 ເລືອກເຟັ້ນ, ຈັດລຽງບຸລິມະສິດ ຂອງ ບັນດາໂຄງການລົງທຶນຂອງລັດ, ໂຄງການລົງທຶນພາຍໃນ ແລະ ຕ່າງປະເທດ ທີ່ຂະແໜງການ ແລະ ທ້ອງຖິ່ນສະເໜີມາ ເພື່ອຈັດເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ, ພ້ອມກັນນັ້ນ ກໍ່ປະສານສົມທົບກັບພາກສ່ວນກ່ຽວຂ້ອງດັດແກ້ໂຄງການ ຖ້າເຫັນວ່າມີຄວາມຈຳເປັນ ເພື່ອສະເໜີລັດຖະບານພິຈາລະນາ ແລະ ຕົກລົງ;

3.3 ເລືອກເຟັ້ນ, ຈັດລຽງບຸລິມະສິດ ແລະ ສະເໜີນະໂຍບາຍກະຕຸກຊຸກຍູ້ ໂຄງການລົງທຶນພາຍໃນ ແລະ ຕ່າງປະເທດ ເພື່ອຂໍອະນຸມັດຕາມລະບຽບການ;

3.4 ເປັນໃຈກາງ ຕິດຕໍ່ພົວພັນ ແລະ ປະສານງານລະຫວ່າງຂະແໜງການຕ່າງໆ ອ້ອມຂ້າງສູນກາງ ແລະ ທ້ອງຖິ່ນ ໃນການຮ່ວມມືດ້ານເສດຖະກິດກັບສາກົນ ເພື່ອການພັດທະນາ;

3.5 ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ທັງສູນກາງ ແລະ ທ້ອງຖິ່ນສ້າງແຜນງານ ແລະ ໂຄງການຮ່ວມມືດ້ານເສດຖະກິດ, ຂົນຂວາຍ, ຍາດແຍ່ງ, ສັງລວມ ແລະ ເລືອກເຟັ້ນບັນດາ

ໂຄງການຊ່ວຍເຫຼືອລ້າ ແລະ ກູ້ຢືມຈາກບັນດາປະເທດ, ອົງການຈັດຕັ້ງສາກົນ ແລະ ສະຖາບັນການເງິນສາກົນ ເພື່ອສະເໜີຕໍ່ ລັດຖະບານພິຈາລະນາຕົກລົງ;

3.6 ດຳເນີນການເຈລະຈາ, ເຊັນສັນຍາ, ອະນຸສັນຍາ ແລະ ບົດບັນທຶກຕ່າງໆ ກັບພາຍໃນ ແລະ ຕ່າງປະເທດ ຕາມການຕົກລົງຂອງລັດຖະບານ;

3.7 ປະສານສົມທົບກັບຂະແໜງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ຕິດຕາມ, ປະເມີນຜົນ, ພິຈາລະນາ ແລະ ແກ້ໄຂບັນຫາຕ່າງໆ ທີ່ເກີດຂຶ້ນໃນເວລາປະຕິບັດໂຄງການລົງທຶນຂອງລັດ, ໂຄງການລົງທຶນພາຍໃນ ແລະ ຕ່າງປະເທດ, ໂຄງການຮ່ວມມື ເພື່ອພັດທະນາຕາມຂັ້ນຕອນ ແລະ ລະບຽບການ;

3.8 ທວງເອົາບົດສະຫຼຸບລາຍງານຂໍ້ມູນຂ່າວສານ, ສະຖິຕິ ແລະ ເອກະສານທາງການ ຈາກພາກສ່ວນທີ່ກ່ຽວຂ້ອງ ນັບທັງລັດວິສາຫະກິດ ເພື່ອສັງລວມສະພາບການເຄື່ອນໄຫວເສດຖະກິດ-ສັງຄົມ ແລະ ການປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ;

3.9 ສັ່ງໂຈະຊົ່ວຄາວໂຄງການລົງທຶນຂອງລັດ, ໂຄງການລົງທຶນພາຍໃນ ແລະ ຕ່າງປະເທດ ທີ່ເຫັນວ່າມີການເຄື່ອນໄຫວຜິດກັບເປົ້າໝາຍ, ຂັດກັບສັນຍາ, ຂັດກັບລະບຽບກົດໝາຍ ເພື່ອສະເໜີລັດຖະບານພິຈາລະນາແກ້ໄຂຕາມຂັ້ນຕອນ ແລະ ລະບຽບການ;

3.10 ແຕ່ງຕັ້ງ, ເລື່ອນຊັ້ນ, ຍົກຍ້າຍ, ສັບຊ້ອນໜ້າທີ່, ຄຸ້ມຄອງ, ກໍ່ສ້າງ, ນຳໃຊ້, ຍ້ອງຍໍ, ປົດຕຳແໜ່ງ, ປະຕິບັດວິໄນ ຕໍ່ ພະນັກງານ-ລັດຖະກອນ ທີ່ຂຶ້ນກັບການຄຸ້ມຄອງຂອງຕົນ;

3.11 ປະຕິບັດສິດຕາມກົດໝາຍວ່າດ້ວຍການສົ່ງເສີມ ແລະ ຄຸ້ມຄອງການລົງທຶນພາຍໃນ ແລະ ຕ່າງປະເທດ ແຫ່ງ ສ.ປ.ປ. ລາວ;

3.12 ຕົກລົງສ້າງຕັ້ງ, ປັບປຸງ ແລະ ຍົກເລີກໜ່ວຍງານສະເພາະກິດ, ບັນດາກົງຈັກການຈັດຕັ້ງຂັ້ນ ພະແນກຂອງກົມ ແລະ ທຽບເທົ່າ, ຂັ້ນຂະແໜງ ຂອງ ພະແນກແຜນການ ແລະ ການລົງທຶນ ຂັ້ນແຂວງ ແລະ ຂັ້ນໜ່ວຍງານຂອງຫ້ອງການແຜນການ ຂັ້ນເມືອງ.

## ໝວດທີ III
## ໂຄງປະກອບການຈັດຕັ້ງ

### ມາດຕາ 4. ໂຄງປະກອບບຸກຄະລາກອນ

ໂຄງປະກອບບຸກຄະລາກອນ ຂອງ ກະຊວງ ແຜນການ ແລະ ການລົງທຶນ ມີດັ່ງນີ້:

4.1 ກະຊວງແຜນການ ແລະ ການລົງທຶນມີ ລັດຖະມົນຕີວ່າການ, ເປັນສະມາຊິກ ຂອງ ລັດຖະບານ ຊຶ່ງໄດ້ຮັບການແຕ່ງຕັ້ງຈາກປະທານປະເທດ ຕາມການສະເໜີຂອງນາຍົກລັດຖະມົນຕີ ແລະ ຖືກຮັບຮອງຈາກສະພາແຫ່ງຊາດ. ລັດຖະມົນຕີວ່າການ ມີຄວາມຮັບຜິດຊອບໃນການປະຕິບັດພາລະບົດບາດ, ໜ້າທີ່ ແລະ ຂອບເຂດສິດຂອງຕົນ ຕາມກົດໝາຍວ່າດ້ວຍລັດຖະບານ ແຫ່ງ ສ.ປ.ປ. ລາວ ແລະ ຕາມດຳລັດສະບັບນີ້ ພ້ອມທັງຮັບຜິດຊອບຕໍ່ການເຄື່ອນໄຫວ ຂອງຂະແໜງແຜນການ ແລະ ການລົງທຶນ ໃນຂອບເຂດທົ່ວປະເທດ, ອຳນວຍຄວາມສະດວກ, ຄວບຄຸມການຈັດຕັ້ງປະຕິບັດແນວທາງນະໂຍບາຍຂອງພັກ ແລະ ລັດຖະບານ, ລັດຖະມົນຕີວ່າການ ມີສິດມອບຄວາມ

ຮັບຜິດຊອບຊົ່ວຄາວໃຫ້ລັດຖະມົນຕີຊ່ວຍວ່າການເປັນຜູ້ຮັກສາການແທນ ໃນເວລາຕິດຂັດ ຫຼື ໄປວຽກທາງໄກ;

**4.2** ກະຊວງແຜນການ ແລະ ການລົງທຶນ ຍັງປະກອບມີ ລັດຖະມົນຕີຊ່ວຍວ່າການຈຳນວນໜຶ່ງ ຕາມຄວາມເໝາະສົມ ຊຶ່ງໄດ້ຮັບການແຕ່ງຕັ້ງຈາກນາຍົກລັດຖະມົນຕີ ຕາມການສະເໜີ ຂອງ ຄະນະຈັດຕັ້ງສູນກາງພັກ; ລັດຖະມົນຕີຊ່ວຍວ່າການ ເປັນຜູ້ຊ່ວຍວຽກລັດຖະມົນຕີວ່າການ ແລະ ລົງເລິກຮັບຜິດຊອບກຸ່ມວຽກໃດໜຶ່ງ ຕາມການມອບໝາຍ ຂອງ ລັດຖະມົນຕີວ່າການ;

**4.3** ກະຊວງແຜນການ ແລະ ການລົງທຶນ ປະກອບມີຫົວໜ້າຫ້ອງການ, ຫົວໜ້າກົມ, ຫົວໜ້າສະຖາບັນ ຊຶ່ງໄດ້ຮັບການແຕ່ງຕັ້ງຈາກນາຍົກລັດຖະມົນຕີ ຕາມການສະເໜີ ຂອງ ຄະນະຈັດຕັ້ງສູນກາງພັກ ບົນພື້ນຖານຄວາມເປັນເອກະພາບກັບລັດຖະມົນຕີວ່າການ, ມີຮອງຫົວໜ້າຫ້ອງການ, ຮອງຫົວໜ້າກົມ, ຮອງຫົວໜ້າສະຖາບັນ, ຫົວໜ້າ ແລະ ຮອງຫົວໜ້າສູນ, ຫົວໜ້າ ແລະ ຮອງຫົວໜ້າພະແນກສັງກັດກົມ, ຫົວໜ້າ ແລະ ຮອງຫົວໜ້າ ພະແນກແຜນການ ແລະ ການລົງທຶນ ຂັ້ນແຂວງ, ຫົວໜ້າຫ້ອງການແຜນການ ຂັ້ນເມືອງ ຊຶ່ງໄດ້ຮັບການແຕ່ງຕັ້ງຈາກ ລັດຖະມົນຕີວ່າການກະຊວງແຜນການ ແລະ ການລົງທຶນ ຕາມການສະເໜີ ຂອງ ກົມຈັດຕັ້ງ ແລະ ພະນັກງານ ແລະ ບົນພື້ນຖານຄວາມເປັນເອກະພາບກັບ ຄະນະຈັດຕັ້ງສູນກາງພັກ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ. ນອກນີ້, ກະຊວງແຜນການ ແລະ ການລົງທຶນ ຍັງປະກອບດ້ວຍພະນັກງານວິຊາການ, ພະນັກງານບໍລິຫານຮັບໃຊ້ທົ່ວໄປຈຳນວນໜຶ່ງ ເພື່ອປະກອບເຂົ້າໃນຕຳແໜ່ງງານຕ່າງໆຕາມຄວາມເໝາະສົມ.

### ມາດຕາ 5. ໂຄງປະກອບກົງຈັກ

ໂຄງປະກອບກົງຈັກ ຂອງ ກະຊວງແຜນການ ແລະ ການລົງທຶນ ມີດັ່ງນີ້:

**5.1 ຂັ້ນສູນກາງປະກອບດ້ວຍ:**

1. ຫ້ອງການ;
2. ກົມ ຈັດຕັ້ງ ແລະ ພະນັກງານ;
3. ກົມ ແຜນການ;
4. ກົມ ປະເມີນຜົນ;
5. ກົມ ສົ່ງເສີມການລົງທຶນ;
6. ກົມ ຮ່ວມມືສາກົນ;
7. ກົມ ສະຖິຕິ;
8. ສະຖາບັນ ຄົ້ນຄ້ວາເສດຖະກິດແຫ່ງຊາດ;
9. ຫ້ອງການ ຄະນະກຳມາທິການຮ່ວມມື ລາວ-ຫວຽດນາມ;
10. ຫ້ອງການ ຄະນະກຳມາທິການຮ່ວມມື ລາວ-ຈີນ.

ຢູ່ພາຍໃນກົມ ແລະ ທຽບເທົ່າກົມອະນຸຍາດໃຫ້ມີພະແນກ, ສູນຝຶກອົບຮົມ, ໂຄງການ ແລະ ໜ່ວຍງານວິຊາສະເພາະຕາມຄວາມຮຽກຮ້ອງຕ້ອງການທີ່ຈຳເປັນຂອງວຽກງານ.

5.2 ຂັ້ນທ້ອງຖິ່ນປະກອບດ້ວຍ:

- ພະແນກ ແຜນການ ແລະ ການລົງທຶນ ແຂວງ, ນະຄອນ;
- ຫ້ອງການ ແຜນການ ເມືອງ, ເທດສະບານ (ຖ້າຈຳເປັນ).

**ມາດຕາ 6. ການກຳນົດພາລະບົດບາດ ແລະ ໜ້າທີ່ຂອງໂຄງປະກອບກົງຈັກ**

ມອບໃຫ້ລັດຖະມົນຕີວ່າການ ກະຊວງແຜນການ ແລະ ການລົງທຶນ ເປັນຜູ້ກຳນົດພາລະບົດບາດ, ໜ້າທີ່, ຂອບເຂດສິດ, ຕຳແໜ່ງ ແລະ ໂຄງປະກອບກົງຈັກຂອງບັນດາຫ້ອງການ, ບັນດາກົມ, ສະຖາບັນ, ພະແນກແຜນການ ແລະ ການລົງທຶນ ຂັ້ນແຂວງ ແລະ ຫ້ອງການແຜນການຂັ້ນເມືອງໃນທົ່ວປະເທດ ບົນພື້ນຖານຄວາມເປັນເອກະພາບ ກັບ ສຳນັກງານນາຍົກລັດຖະມົນຕີ.

**ມາດຕາ 7. ຫຼັກການຄຸ້ມຄອງຕາມຂະແໜງການ**

ກະຊວງແຜນການ ແລະ ການລົງທຶນ ຄຸ້ມຄອງຂະແໜງແຜນການ ແລະ ການລົງທຶນ ຕາມສາຍຕັ້ງຂອງຕົນ ແຕ່ຂັ້ນສູນກາງລົງຮອດທ້ອງຖິ່ນ ໃນຂອບເຂດທົ່ວປະເທດ ບົນພື້ນຖານລະບຽບກົດໝາຍກຳນົດ.

## ໝວດທີ IV
## ລະບອບແບບແຜນວິທີເຮັດວຽກ

**ມາດຕາ 8. ຫຼັກການລວມ**

ກະຊວງແຜນການ ແລະ ການລົງທຶນ ເຮັດວຽກຕາມຫຼັກການລຸ່ມນີ້:

**8.1** ການເຄື່ອນໄຫວ ແລະ ດຳເນີນງານ ຂອງ ກະຊວງແຜນການ ແລະ ການລົງທຶນ ຕ້ອງຍຶດໝັ້ນຕາມແນວທາງນະໂຍບາຍຂອງພັກ ແລະ ລະບຽບກົດໝາຍຂອງລັດ;

**8.2** ເຮັດວຽກຕາມຫຼັກການລວມສູນປະຊາທິປະໄຕ, ນຳພາເປັນໝູ່ຄະນະ ບຸກຄົນຮັບຜິດຊອບ, ປະຕິບັດລະບອບທົວໜ້າດຽວຢ່າງເຂັ້ມງວດ ແລະ ມີການແບ່ງງານກັນຢ່າງຈະແຈ້ງ, ການມອບສິດ ແລະ ມອບຄວາມຮັບຜິດຊອບ ຕ້ອງມີລາຍລັກອັກສອນຢ່າງເປັນທາງການ;

**8.3** ເຮັດວຽກຢ່າງມີແຜນການ, ມີກຳນົດເວລາ, ຕາມສາຍການຈັດຕັ້ງ, ມີການປະສານງານ ແລະ ມີການຕິດຕາມກວດກາເປັນປົກກະຕິ ເພື່ອຊຸກຍູ້ການຈັດຕັ້ງປະຕິບັດແນວທາງນະໂຍບາຍລວມຂອງພັກ ແລະ ບັນດາລະບຽບກົດໝາຍ ຕ່າງໆ ຂອງລັດຖະບານໃຫ້ໄດ້ຮັບຜົນເປັນຢ່າງດີ, ຊອກວິທີການແກ້ໄຂຢ່າງທັນການຕໍ່ບັນຫາຕ່າງໆ ທີ່ເກີດຂຶ້ນ;

**8.4** ຕ້ອງປະຕິບັດລະບອບປະຊຸມ, ສ່ອງແສງ, ລາຍງານ, ກວດກາຢ່າງເຂັ້ມງວດ ເປັນຕົ້ນແມ່ນກອງປະຊຸມປະຈຳສັບປະດາ, ກອງປະຊຸມສະຫຼຸບປະຈຳເດືອນ, 03 ເດືອນ, 06 ເດືອນ, ປະຈຳປີ ແລະ ກອງປະຊຸມວິສາມັນຕ່າງໆ ເພື່ອກຳສະພາບການຮອບດ້ານ ຈາກແຕ່ລະພາກສ່ວນ ແລ້ວສັງລວມລາຍງານໃຫ້ລັດຖະບານຊາບ.

## ໝວດທີ V
## ບົດບັນຍັດສຸດທ້າຍ

**ມາດຕາ 9. ງົບປະມານ ແລະ ກາປະທັບ**

ກະຊວງແຜນການ ແລະ ການລົງທຶນ, ບັນດາກົມ ແລະ ທຽບເທົ່າກົມ, ພະແນກແຜນການ ແລະ ການລົງທຶນ ຂັ້ນແຂວງ, ຫ້ອງການແຜນການ ຂັ້ນເມືອງ ອະນຸຍາດໃຫ້ມີງົບປະມານ ແລະ ກາປະທັບຂອງຕົນ ທີ່ລັດປະກອບໃຫ້ ເພື່ອເຄື່ອນໄຫວວຽກງານທາງລັດຖະການ.

**ມາດຕາ 10. ການຈັດຕັ້ງປະຕິບັດ**

ກະຊວງແຜນການ ແລະ ການລົງທຶນ, ບັນດາກະຊວງ, ອົງການທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນຂັ້ນແຂວງ, ຂັ້ນເມືອງ ແລະ ທຸກພາກສ່ວນຈົ່ງຮັບຮູ້ ແລະ ປະຕິບັດຕາມດຳລັດສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 11. ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ຄະນະກຳມະການແຜນການ ແລະ ການລົງທຶນ ສະບັບເລກທີ **118/ນຍ**, ລົງວັນທີ **24** ສິງຫາ **2004**.

**ນາຍົກລັດຖະມົນຕີ ແຫ່ງ ສ.ປ.ປ. ລາວ**

ບົວສອນ ບຸບຜາວັນ